ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0160 /ກປ

ນະຄອນຫຼວງວຽງຈັນ, ວັນທີ 19 JAN 2022

# ຄຳສັ່ງ

## ວ່າດ້ວຍ ການໂຈະ ການອະນຸຍາດ ນຳເຂົ້າ, ສົ່ງຜ່ານໝູມີຊີວິດ ແລະ ຜະລິດຕະພັນໝູ ຈາກຣາຊະອານາຈັກໄທ ແລະ ປະເທດທີ່ມີການລະບາດ ຂອງເຊື້ອພະຍາດອະຫິວາໝູອາຟຣິກາ

ເຖິງ: - ທ່ານ ຫົວໜ້າຫ້ອງການ, ບັນດາກົມ ແລະ ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;
- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ.

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ (ສະບັບປັບປຸງ) ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ການລາຍງານການພົບເຊື້ອອະຫິວາໝູອາຟຣິກາ ຂອງກົມປະສຸສັດແຫ່ງປະເທດໄທ ຜ່ານສື່ຂອງ ສຳນັກຂ່າວ Thai PBS ຄັ້ງວັນທີ 11 ມັງກອນ 2022;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 0078/ກລປ. ລົງວັນທີ 13 ມັງກອນ 2022.

ໃນໄລຍະຕົ້ນເດືອນມັງກອນ (1) ປີ 2022 ຜ່ານມານີ້ ສື່ໂທລະພາບ, ເວບໄຊສ ແລະ ສື່ສັງຄົມອອນລາຍຕ່າງໆ ຂອງປະເທດໃກ້ຄຽງ ໄດ້ມີການລາຍງານວ່າ ມີການພົບການລະບາດຂອງເຊື້ອພະຍາດອະຫິວາໝູອາຟຣິກາ ໃນບາງເຂດ ຂອງຣາຊະອານາຈັກໄທ ຊຶ່ງສິ່ງຜົນເຮັດໃຫ້ມີຄວາມສ່ຽງທີ່ພະຍາດດັ່ງກ່າວຈະແຜ່ລະບາດເຂົ້າມາໃນ ສປປ ລາວ. ສະນັ້ນ, ເພື່ອປ້ອງກັນ, ສະກັດກັ້ນ ແລະ ຕ້ານ ການລະບາດຂອງພະຍາດອະຫິວາໝູອາຟຣິກາ ບໍ່ໃຫ້ເຂົ້າມາແຜ່ລະບາດຢູ່ ສປປ ລາວ ນັ້ນ:

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:

1. ໃຫ້ກົມລ້ຽງສັດ ແລະ ການປະມົງ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ໂຈະການອະນຸຍາດ ນຳເຂົ້າ ແລະ ສົ່ງຜ່ານ ໝູມີຊີວິດ ແລະ ຜະລິດຕະພັນໝູ ທຸກຊະນິດ ລວມທັງ ຜະລິດຕະພັນໝູ ປຸງແຕ່ງເບື້ອງຕົ້ນ ຈາກຣາຊະອານາຈັກໄທ ແລະ ປະເທດທີ່ມີການລະບາດຂອງເຊື້ອພະຍາດອະຫິວາໝູອາຟຣິກາ ເຂົ້າມາ ຫຼື ສົ່ງຜ່ານ ສປປ ລາວ;
2. ໃຫ້ກົມລ້ຽງສັດ ແລະ ການປະມົງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ຊີ້ນຳສັດຕະວະແພດປະຈຳ ດ່ານຊາຍແດນສາກົນ, ສະໜາມບິນສາກົນ, ດ່ານທ່າບົກທ່ານາແລ້ງ, ດ່ານຊາຍແດນທ້ອງຖິ່ນ ແລະ ດ່ານຊາຍແດນປະເພນີ ເພີ່ມທະວີ ຕິດຕາມ ແລະ ກວດກາ ການນຳເຂົ້າ ຫຼື ສົ່ງຜ່ານ ໝູມີຊີວິດ, ຜະລິດຕະພັນໝູ ທຸກຊະນິດ ລວມທັງ ຜະລິດຕະພັນໝູປຸງແຕ່ງເບື້ອງຕົ້ນ ຈາກຣາຊອານາຈັກໄທ ຫຼື ຈາກປະເທດທີ່ມີ

ການລະບາດຂອງເຊື້ອພະຍາດອະຫິວາໝູອາຟຣິກາ ເຂົ້າມາ ສປປ ລາວ. ໃນກໍລະນີກວດພົບເຫັນ ໃຫ້ຍຶດ ແລະ ດຳເນີນການ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;

3. ໃນກໍລະນີມີເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ພົບເຫັນຜູ້ລະເມີດ ຫຼື ກະທຳຜິດ ທີ່ຍັງມີການນຳເອົາໝູມີຊີວິດ ແລະ ຜະລິດຕະພັນໝູປຸງແຕ່ງເບື້ອງຕົ້ນຈາກຣາຊອານາຈັກໄທ ຫຼື ຜ່ານຣາຊອານາຈັກໄທ ເຂົ້າມາດ່ານ ຕ້ອງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ປະຕິບັດວິໄນ ແລະ ດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການ ພ້ອມທັງລາຍງານໃຫ້ພະແນກກະສິກຳ ແລະ ປ່າໄມ້, ແຂວງ ຫຼື ນະຄອນຫຼວງວຽງຈັນ ທີ່ກ່ຽວຂ້ອງ ແລະ ກົມລ້ຽງສັດ ແລະ ການປະມົງຮັບຊາບ ໂດຍດ່ວນ;

4. ສຳລັບຂອງກາງທີ່ກວດຍຶດໄດ້ຈາກການລັກລອບນຳເຂົ້າ ຫຼື ສົ່ງຜ່ານ ໃຫ້ນຳໄປທຳລາຍຖິ້ມດ້ວຍການ ເຜົາ ຫຼື ຝັງ ຕາມຫຼັກວິຊາການ. ສ່ວນຜູ້ທີ່ລະເມີດ ໃຫ້ເຮັດບົດບັນທຶກກ່າວເຕືອນ, ປັບໃໝ ຫຼື ດຳເນີນຄະດີຕາມກົດໝາຍ ແລະ ລະບຽບການ;

5. ໃຫ້ກົມລ້ຽງສັດ ແລະ ການປະມົງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ອອກຄຳແນະນຳດ້ານເຕັກນິກວິຊາການ ເພື່ອຜັນຂະຫຍາຍຄຳສັ່ງສະບັບນີ້ ເປັນອັນລະອຽດ ພ້ອມທັງ ເພີ່ມທະວີເປັນເຈົ້າການເຝົ້າລະວັງ, ປ້ອງກັນ ແລະ ຄວບຄຸມພະຍາດອະຫິວາໝູອາຟຣິກາຢູ່ແຕ່ລະທ້ອງຖິ່ນໃຫ້ເຂັ້ມງວດ; ກໍລະນີພົບເຫັນ ໝູເຈັບ ຫຼື ຕາຍຍ້ອນພະຍາດດັ່ງກ່າວ ໃຫ້ນຳໃຊ້ມາດຕະການທາງດ້ານເຕັກນິກ ຕາມຫຼັກວິຊາການຢ່າງຮີບດ່ວນ;

6. ມອບໃຫ້ ຫ້ອງການ, ບັນດາກົມ ແລະ ສະຖາບັນອ້ອມຂ້າງກະຊວງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ໃຫ້ໄດ້ຮັບຜົນດີ. ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ລາຍງານການນຳກະຊວງກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາແກ້ໄຂໃຫ້ທັນກັບສະພາບການ;

7. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ປອ. ເພັດ ພົມພິພັກ

<u>ບ່ອນນຳສົ່ງ:</u>

| | | |
|---|---|---|
| 1. | ທ່ານ ລມຕ, ຮລມຕ ທ່ານລະ | 01 ສະບັບ (ເພື່ອລາຍງານ); |
| 2. | ຫ້ອງການ | 01 ສະບັບ (ເພື່ອລາຍງານ); |
| 3. | ບັນດາກົມ, ສະຖາບັນ ບ່ອນລະ | 01 ສະບັບ (ເພື່ອຮັບຊາບ); |
| 4. | ພະແນກນິຕິກຳ | 01 ສະບັບ (ເພື່ອຊາບ); |
| 5. | ພະແນກເລຂານຸການ ແລະ ພິທີການ | 01 ສະບັບ; |
| 6. | ພະແນກຄົ້ນຄວ້າ ແລະ ສັງລວມ | 01 ສະບັບ; |
| 7. | ເກັບຮັກສາໄວ້ | 01 ສະບັບ. |